## ມິຊຊາອາທິດທີ 24 ກຳນົດທຳມະດາ ປີ B
## ວັນອາທິດທີ 16 ກັນຍາ 2018



**ພຣະວໍລະສານໂດຍນັກບຸນມາກໂກ 8, 27-35**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດໄປໃນເຂດເມືອງເຊຊາເຣຟີລິປພ້ອມກັບພວກສາວົກ. ໃນເວລາເດີນທາງຢູ່ນັ້ນ, ພຣະອົງຊົງຖາມພວກເຂົາວ່າ: ຄົນທັງຫລາຍເວົ້າກັນວ່າເຮົາແມ່ນໃຜ? ພວກເຂົາທູນຕອບວ່າ: ລາງຄົນວ່າແມ່ນຢວງບັບຕິສຕາ, ລາງຄົນວ່າແມ່ນປະພາສົກເອລີອາ, ລາງຄົນວ່າແມ່ນປະພາສົກອົງໃດອົງໜຶ່ງ. ພຣະອົງຈຶ່ງຖາມພວກເຂົາອີກວ່າ: ສ່ວນພວກເຈົ້າ, ພວກເຈົ້າວ່າເຮົາແມ່ນໃຜ? ເປໂຕທູນຕອບວ່າ: ພຣະອົງແມ່ນພຣະກຣິສໂຕ.

ພຣະອົງຊົງຫ້າມພວກເຂົາບໍ່ໃຫ້ເວົ້າສູ່ໃຜຟັງເດັດຂາດ. ແລ້ວພຣະອົງໄດ້ລົງມືສອນໃຫ້ພວກເຂົາຮູ້ວ່າ ບຸດມະນຸດຈະຕ້ອງທົນທໍລະມານຫລາຍ, ຕ້ອງຖືກພວກອາວຸໂສ, ພວກຫົວໜ້າສົງແລະນັກກົດໝາຍປະຖິ້ມ, ຕ້ອງຖືກປະຫານຊີວິດແລະກັບຄືນຊີບໃນມື້ທີສາມຕໍ່ມາ. ພຣະເຢຊູເຈົ້າຊົງບອກເລື່ອງນີ້ຢ່າງເປີດເຜີຍ. ເປໂຕຈຶ່ງພາພຣະອົງໄປຕ່າງຫາກແລະຕິຕຽນພຣະອົງ.

ສ່ວນພຣະເຢຊູເຈົ້າຊົງຫັນຄືນມາເບິ່ງພວກສາວົກແລ້ວເວົ້າຮ້າຍເປໂຕຢ່າງແຮງວ່າ:ຜີຊາຕານ, ໜີໄປໃຫ້ຫວິດ. ຄວາມຄິດຂອງເຈົ້າບໍ່ແມ່ນຄວາມຄິດຂອງພຣະເຈົ້າ ແຕ່ແມ່ນຄວາມຄິດຂອງມະນຸດ.

ແລ້ວພຣະອົງຊົງຮຽກຝູງຊົນພ້ອມກັບພວກສາວົກເຂົ້າມາກ່າວວ່າ: ຜູ້ໃດຢາກມານຳເຮົາ, ກໍໃຫ້ສະລະປະຕົວເອງ, ໃຫ້ແບກກາງເຂນຂອງຕົນແລະຕາມຫລັງເຮົາມາ. ດ້ວຍວ່າຜູ້ໃດຢາກຊ່ວຍຊີວິດຂອງຕົນໄວ້ ກໍຈະທຳໃຫ້ມັນເສຍໄປ. ສ່ວນຜູ້ໃດຍອມສະລະຊີວິດຂອງຕົນເພື່ອເຮົາແລະພຣະວໍລະສານ ຜູ້ນັ້ນກໍຈະຊ່ວຍຊີວິດຂອງຕົນໃຫ້ຮອດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 8, 27-35**

ຫລັງຈາກພາລະກິດການເທດສອນແລະປິ່ນປົວພະຍາດໂລຄາຕ່າງໆໃນເຂດແຂວງກາລີເລ. ພຣະເຢຊູເຈົ້າພ້ອມກັບພວກສາວົກໄດ້ພາກັນມຸ່ງສູ່ນະຄອນເຢລູຊາແລມບ່ອນທີ່ພຣະອົງຈະຮັບທົນທໍລະມານແລະຕາຍ. ລະຫວ່າງທາງ, ພຣະອົງໄດ້ຖາມພວກສາວົກກ່ຽວກັບຄວາມຄິດເຫັນຂອງຄົນທົ່ວໄປກ່ຽວກັບຕົວຂອງພຣະອົງ. ແລະເປັນຕົ້ນພຣະເຢຊູເຈົ້າໄດ້ຖາມພວກສາວົກແຕ່ລະຄົນຜູ້ທີ່ໄດ້ກິນໄດ້ດື່ມຮ່ວມກັບພຣະອົງ, ຜູ້ທີ່ໄດ້ເຫັນວຽກງານການປະກາດອານາຈັກຂອງພຣະອົງ ສຳລັບພວກເຂົາ, ພຣະອົງແມ່ນໃຜ? ເປັນຫຍັງພຣະເຢຊູເຈົ້າຈຶ່ງຖາມຄຳຖາມນີ້ກັບພວກສາວົກ? ອາດຈະແມ່ນພຣະອົງເຫັນວ່າຄວາມເຂົ້າໃຈຂອງພວກສາວົກກ່ຽວກັບຕົວຂອງພຣະອົງເປັນຄວາມເຂົ້າໃຈແບບພາຍນອກເໝືອນກັບຝູງຊົນທີ່ຕິດຕາມພຣະອົງມາ. ພວກເຂົານິຍົມຊົມຊອບພຣະອົງ ຍ້ອນພຣະອົງທຳໃນສິ່ງທີ່ພວກເຂົາຕ້ອງການ. ພວກເຂົາຕິດຕາມພຣະອົງ ຍ້ອນຫວັງວ່າຈະໄດ້ມີສະພາບຊີວິດທີ່ດີຂຶ້ນກວ່າເກົ່າ. ຄວາມຄາດຫວັງເຫລົ່ານີ້ອາດຈະເປັນຄວາມຄາດຫວັງດຽວກັບພວກສາວົກຜູ້ຢູ່ໃກ້ຊິດກັບພຣະອົງ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງຖາມພວກສາວົກເໝືອນກັບຖາມຝູງຊົນວ່າ: ສຳລັບພວກເຈົ້າ ເຮົາແມ່ນໃຜ? ຄຳຖາມນີ້ເບິ່ງຄືບໍ່ໄດ້ງ່າຍສຳລັບພວກເຂົາ ເພາະມີແຕ່ເປໂຕທີ່ຕອບວ່າ: ພຣະອົງແມ່ນພຣະກຣິສໂຕ. ເຖິງວ່າຄຳຕອບນີ້ເບິ່ງຄືວ່າຖືກຕ້ອງ, ແຕ່ໃນຄວາມເປັນຈິງເປໂຕໄດ້ເຂົ້າໃຈໃນສິ່ງທີ່ຕົນປະກາດອອກມາບໍ? ຖ້າເປໂຕເຂົ້າໃຈຄຳວ່າ ພຣະກຣິສໂຕ ໝາຍເຖິງຜູ້ທີ່ຖືກສົ່ງມາໃນໂລກນີ້ເພື່ອຮັບໃຊ້ຄົນອື່ນຈົນເຖິງສະລະຊີວິດຂອງຕົນເພື່ອຄວາມຣອດຂອງມະນຸດທຸກຄົນ ເປ ໂຕຄົງຈະບໍ່ຫ້າມພຣະເຢຊູເຈົ້າໃຫ້ໄປຮັບທົນທໍລະມານແລະຕາຍ. ເພາະຄວາມຄິດຂອງເປໂຕຍັງເປັນຄວາມຄິດແບບມະນຸດໝາຍວ່າ ຄວາມຄິດທີ່ເຫັນແກ່ຕົວແລະຂາດຄວາມຮັກ. ດັ່ງນັ້ນພຣະເຢຊູເຈົ້າຈຶ່ງຕິຕຽນເຂົາວ່າ: ຄວາມຄິດຂອງເຈົ້າບໍ່ແມ່ນຄວາມຄິດຂອງພຣະເຈົ້າ ແຕ່ແມ່ນຄວາມຄິດຂອງມະນຸດ.

ຄວາມຄິດຂອງເປໂຕນີ້ອາດເປັນຄວາມຄິດຂອງພວກເຮົາແຕ່ລະຄົນ. ຄຳຕອບຂອງເປໂຕນີ້ ອາດຈະເປັນຄຳຖາມສຳລັບພວກເຮົາແຕ່ລະຄົນວ່າ ຜູ້ທີ່ພວກເຮົາເຊື່ອແລະຮຽກວ່າພຣະກຣິສໂຕນັ້ນແມ່ນໃຜສຳລັບພວກເຮົາ? ເພິ່ນແມ່ນຜູ້ທີ່ຕອບສະໜອງຕາມຄຳວອນຂໍແລະຄວາມຕ້ອງການຂອງພວກເຮົາບໍ? ເພິ່ນແມ່ນຜູ້ທີ່ພວກເຮົາຫວັງວ່າຈະສາມາດໃຫ້ພວກເຮົາມີຄວາມສຸກ, ຄວາມຮັ່ງມີແຕ່ຢູ່ໃນໂລກນີ້ບໍ? ຫລືເພິ່ນແມ່ນພຣະບຸດຂອງພຣະເຈົ້າທີ່ລົງມາໃນໂລກນີ້ເພື່ອຮັບທົນທໍລະມານແລະຕາຍຍ້ອນບາບຂອງພວກເຮົາ.

ຄຳຖາມຂອງພຣະເຢຊູເຈົ້າໃນວັນນີ້ວ່າ: ສຳລັບພວກເຈົ້າ, ເຮົາແມ່ນໃຜ? ບໍ່ແມ່ນຄຳຖາມສຳລັບຝູງຊົນ, ບໍ່ແມ່ນຄຳຖາມສຳລັບພວກສາວົກເທົ່ານັ້ນ ແຕ່ເປັນຄຳຖາມສຳລັບພວກເຮົາແຕ່ລະຄົນຜູ້ທີ່ເຊື່ອໃນພຣະອົງ. ແລະຄຳຕອບຂອງພວກເຮົາແມ່ນຫຍັງ?... ຄຳຕອບທີ່ຖືກຕ້ອງສຳລັບຜູ້ເປັນລູກສິດຂອງພຣະອົງຄື: ຜູ້ທີ່ຢາກເປັນລູກສິດຂອງພຣະອົງຕ້ອງຍອມສະລະຕົວເອງ, ແບກກາງເຂນຂອງຕົນແຕ່ລະວັນແລະຍ່າງຕາມຫລັງພຣະອົງໄປຈົນຮອດເຢລູຊາແລມສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ